ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LALCO
LAO ASEAN LEASING PUBLIC COMPANY

ເລກທີ: 9097

ທີ່ ນະຄອນຫຼວງວຽງຈັນ, ວັນທີ: 11 ເມສາ 2024

ຮຽນ: ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື.

ເລື່ອງ: ແຈ້ງກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ເຂົ້າຮ່ວມກອງປະຊຸມວິສາມັນ (Extraordinary shareholder meeting)ແລະ ກຳນົດສິດຜູ້ທີ່ມີສິດໄດ້ຮັບເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄວຍະຜ່ານມາ ຮອດທ້າຍ 31 ທັນວາ 2022.

- ອີງຕາມມະຕິກອງປະຊຸມຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເລກທີ 9096 ລົງວັນທີ 11 ເມສາ 2024.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ວອຊ) ຂໍປັນກຽດແຈ້ງມາຍັງທ່ານ ກ່ຽວກັບມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ກຳນົດເອົາວັນທີ 18 ເມສາ 2024 ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມວິສາມັນ ແລະ ກຳນົດສິດຜູ້ທີ່ມີສິດໄດ້ຮັບເງິນປັນຜົນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຈາກຜົນການດຳເນີນທຸລະກິດ ໃນໄວຍະຜ່ານມາ ຮອດທ້າຍ 31 ທັນວາ 2022 ຈຳນວນ 318,384,000,000ກີບ, ເງິນປັນຜົນຕໍ່ຮຸ້ນ 1,056 ກີບ ກຳນົດຈ່າຍໃນວັນທີ 31 ພຶດສະພາ 2024.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ວອຊ) ຂໍແຈ້ງມາຍັງຄະນະຄຸ້ມຄອງຫຼັກຊັບຊາບ ວ່າກອງປະຊຸມຜູ້ຖືຮຸ້ນວິສາມັນ ຈະຈັດຂຶ້ນໃນວັນທີ 10 ພຶດສະພາ 2024 ເວລາ 11:00 ໂມງເຊົ້າ (ການລົງທະບຽນເລີ່ມຕົ້ນເວລາ 10:30 ຕອນເຊົ້າ) ທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຕັ້ງ ເອັນເອັນເອັນ, ຖະໜົນ ບຸວິຈັນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ.

ສະນັ້ນ, ຈຶ່ງສະເໜີ ມາຍັງທ່ານ ເພື່ອພິຈາລະນາຕາມສົມຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາ ຊຽນ ເຊົ່າສິນເຊື່ອ ມະຫາຊົນ LAO ASEAN LEASING PUBLIC COMPANY

大島嘉仁

ທ່ານ Yoshihito Oshima

สแกนด้วย CamScanner